ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານໜອງຄົນຄູ ເມືອງນາຊາຍທອງ
ແຂວງນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ 030-988-2809

ເລກທີ: 083/ລອທ

ນະຄອນຫຼວງວຽງຈັນ,ເລກທີ: 16 JUN 2025

ແຜນປັບປຸງແກ້ໄຂການຂາດທຶນ

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.
ທ່ານ ຜູ້ຖືຮຸ້ນຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ນຳສົ່ງແຜນການປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ. ປີ 2025.

- ອີງຕາມ ລະບຽບວ່າດ້ວຍການຈົດທະບຽນຊົນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023. ມາດຕາ 26.
- ອີງຕາມ ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ສະບັບ ເລກທີ 639/ຕລຊລ, ລົງວັນທີ 06 ພຶດສະພາ 2025.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບໜັງສືແຈ້ງການນຳສົ່ງການຮັກສາສະຖານະພາບການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ(ສ້າງແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ). ສະບັບເລກທີ 639/ຕລຊລ, ລົງວັນທີ 06 ພຶດສະພາ 2025. ບໍລິສັດມີຄວາມຍິນດີເປັນຢ່າງຍິ່ງທີ່ຈະໃຫ້ຄວາມຊີ້ແຈງເຖິງແຜນປັບປຸງການແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ໃຫ້ກັບຄະນະກຳມະການຄຸ້ມຄອງຫຼັກຊັບລາວ ແລະ ຕະຫຼາດຫຼັກຊັ້ລລາວ.

I. ສາເຫດ ແລະ ຜົນກະທົບ ທີ່ເຮັດໃຫ້ບໍລິສັດຂາດທຶນ

ໃນປີ 2024 ທີ່ຜ່ານມາ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຜົນກະທົບຈາກສະພາບອາກາດ ເກີດໄພແຫ້ງແລ້ງ, ຄາລາວັດຖຸດິບມີການຜັນປ່ຽນໃນຕະຫຼາດໂລກຢ່າງຮຸນແຮງ ຈຶ່ງເຮັດໃຫ້ການຜະລິດຫຼຸດລົງຫຼາຍ ແລະ ບໍ່ພຽງພໍຕໍ່ຄວາມຕ້ອງການໃນທ້ອງຕະຫຼາດ. ບໍລິສັດ ຈຶ່ງມີຄວາມຈຳເປັນຕ້ອງໄດ້ນຳວັດຖຸດິບຈາກພາຍນອກເພື່ອນຳເຂົ້າມາຕອບສະໜອງພາຍໃນ. ຍ້ອນສາເຫດນັ້ນຈຶ່ງສົ່ງຜົນກະທົບໃຫ້ບໍລິສັດຂາດທຶນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຜົນກະທົບ ຈາກອັດຕາແລກປ່ຽນ, ຜົນຜະລິດຫຼຸດລົງ ເນື່ອງຈາກ ໃນປີທີ່ຜ່ານມາຊາວສວນປາມໄດ້ພົບເຈີກັບສະພາບອາກາດແຫ້ງແລ້ງເຮັດໃຫ້ຂາດແຄ້ນນ້ຳ, ຂາດການບຳລຸງຮັກສາ, ໃສ່ປຸ໋ຍ ແລະ ການດູແລບໍ່ພຽງພໍຕໍ່ຄວາມຕ້ອງການຂອງຕົ້ນປາມ. ຈຶ່ງເຮັດໃຫ້ໄດ້ຮັບຜົນຜະລິດຕ່ຳລົງຈາກປີກ່ອນ.

II. ວິທີແກ້ໄຂທີ່ສົ່ງຜົນໃຫ້ ບໍລິສັດ ຂາດທຶນ

ຜູ້ອຳນວຍການ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ບໍ່ໄດ້ນິ່ງນອນໃຈຕໍ່ກັບສະພາບບັນຫາທີ່ເກີດຂຶ້ນແຕ່ຢ່າງໃດ ໂດຍໄດ້ປຶກສາຫາລືເພື່ອຫາແນວທາງແກ້ໄຂກັບບັນຫາທີ່ເກີດຂຶ້ນ. ເພື່ອກອບກູ້ສະພາບ, ສະຖານະການທີ່ດີຂຶ້ນ ຈາກເດີ່ມ, ບໍລິສັດ ໄດ້ເນັ້ນໃສ່ການຜັກດັນ ແລະ ສົ່ງເສີມໃຫ້ຊາວສວນປາມປູກພາຍໃນປະເທດພ້ອມທັງເອົາໃຈໃສ່ໃນ ການດູແລ ແລະ ບຳລຸງຮັກສາ. ເພື່ອຟື້ນຟູຜົນຜະລິດທີ່ຈະໄດ້ຮັບໃນປີຕໍ່ໄປ ແລະ ສົ່ງອອກນອກປະເທດໃນອານາຄົດ.

ນອກນັ້ນ, ບໍລິສັດ ຍັງໄດ້ເຂັ້ມງວດໃນການຄວບຄຸມການຜະລິດພາຍໃນເຊັ່ນ: ການຄັດສັນຄຸນພະພາບຂອງ ວັດຖຸດິບທີ່ນຳມາໃຊ້ໃນອຸດສາຫະກຳ ເພື່ອໃຫ້ມີຄຸນນະພາບໃນການຜະລິດ. ບໍລິສັດ ຫ້ອງຢ່າງຍິ່ງວ່າວ່າທາງຕະຫຼາດຫຼັກ ຊັບລາວ ໄດ້ຮັບການຊີ້ແຈ້ງຄວາມຊັດເຈນຕໍ່ແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ແລະ ໄດ້ຮັບຄວາມເຂົ້າໃຈຕໍ່ ກັບບັນຫາທີ່ເກີດຂຶ້ນຂອງ ບໍລິສັດ ດ້ວຍ.

- ປະລິມານການຈຳໜ່າຍ ໃນປີ 2025
  - ນ້ຳມັນປາມດິບ 60,000 ລ້ານກີບ
  - ກາກປາມ 6,000 ລ້ານກີບ
  - ປຸ໋ຍ 3,600 ລ້ານກີບ
  - ຕົ້ນກ້າ 1,750 ລ້ານກີບ

- ❖ ບໍລິສັດຈະສືບຕໍ່ແຜນການດຳເນີນທຸລະກິດ
  - ແຜນການຂາຍນ້ຳມັນປາມດິບ CPO: ບໍລິສັດ໌ຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ ບວກກັບຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025.
  - ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸ ບັນ. ບໍລິສັດ ມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ 2025
  - ແຜນການຂາຍປຸ໋ຍ ໃນປີ 2025 ບໍລິສັດໄດ້ສົ່ງເສີມຊາວກະສິກອນທີ່ເອັດກະສິກຳອື່ນໆ ເຊັ່ນ: ເຂົ້າ, ມັນຕົ້ນ, ຢາງພາລາ, ແລະອື່ນໆເພື່ອເພີ່ມຍອດຂາຍ.
  - ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງ ອອກ ແລະຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2025.
  - ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິຈານແລະນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ

- ຍິ່ງໄປກວ່ານັ້ນ, ບໍລິສັດ ໄດ້ຄົ້ນຄວ້າຫາເຕັກໂນໂລຊີໃໝ່ເຂົ້າໃນການຜະລິດ ເພື່ອຊ່ວຍຫຼຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດຕໍ່ໆໄປ.

ດັ່ງນັ້ນ, ຈຶ່ງເຮັດບົດລາຍງານ ສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຜູ້ອຳນວຍການໃຫ່ຍ

ປອ. ເສດ ພັດທະນະມາດ